ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ່ 04363/ຍທຂ

ນະຄອນຫລວງວຽງຈັນ, ວັນທີ່ 30/03/2010

# ແຈ້ງການ

ຮຽນ : ທ່ານຫົວໜ້າພະແນກ ຍທຂ ບັນດາແຂວງ ແລະ ນະຄອນຫລວງ

ເລື່ອງ : ການຄຸ້ມຄອງຄວາມປອດໄພທາງຖະໜົນ ໃນຊ່ວງບຸນປີໃໝ່ລາວ ພສ 2553

ອີງຕາມສະຖິຕິອຸປະຕິເຫດໃນຊ່ວງສະເຫລີມສະຫລອງບຸນປີໃໝ່ລາວທີ່ຜ່ານມາເຫັນວ່າມີອຸປະຕິເຫດເກີດຂຶ້ນຢ່າງຫລວງຫລາຍ, ກໍ່ໃຫ້ເກີດການບາດເຈັບ, ເສຍອົງຄະ, ພິການ, ຮ້າຍແຮງກວ່ານັ້ນມີຫລາຍຄົນຕ້ອງ ເສັຍຊີວິດ ແລະ ເປັນຜົນພາໃຫ້ຊັບສິນ ເປັນຈຳນວນບໍ່ໜ້ອຍຖືກເປ່ເພເສຍຫາຍ, ເນື່ອງຈາກວ່າ ມີຜູ້ຂັບຂີ່ຈຳນວນບໍ່ໜ້ອຍທີ່ດື່ມເຫລົ້າເມົາແລ້ວຂັບລົດ, ຂັບຂີ່ໄວເກີນກຳນົດ, ຂັບຂີ່ດ້ວຍຄວາມປະໝາດ ແລະ ດ້ວຍຄວາມຄຶກຄະນອງ ເປັນຜົນພາໃຫ້ເກີດອຸປະຕິເຫດ, ສ້າງຄວາມເປັນອັນຕະລາຍ ແລະ ຄວາມສັບສົນໃຫ້ແກ່ຜູ້ໃຊ້ຖະໜົນອື່ນໆ.

ສະນັ້ນ,ເພື່ອເຮັດໃຫ້ການຈະລາຈອນຕາມທ້ອງຖະໜົນໃນຂອບເຂດທົ່ວປະເທດມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປອດໄພ ແລະ ໃຫ້ປະຊາຊົນລາວທຸກທົ່ວໜ້າໄດ້ພ້ອມກັນສະເຫລີມສະຫລອງ ປີໃໝ່ລາວດ້ວຍຄວາມມ່ວນຊື່ນ ໂດຍປາສະຈາກການເກີດອຸປະຕິເຫດ.

ລັດຖະມົນຕີວ່າການ ອອກແຈ້ງການ :

1. ໃຫ້ ພະແນກ ຍທຂ ບັນດາແຂວງ ແລະ ນະຄອນຫລວງ ສົມທົບກັບເຈົ້າໜ້າທີ່ ປກສ, ຕຳຫລວດຈະລາຈອນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ວາງມາດຕະການໃນການປ້ອງກັນອຸປະຕິເຫດໃນຊ່ວງບຸນປີໃໝ່ທີ່ຈະມາເຖິງ ຢ່າງເຂັ້ມງວດ ດັ່ງນີ້ :
   - ຜູ້ຫລີ້ນນ້ຳ, ບໍລິການ, ຂາຍເຄື່ອງ ຫລືປະຕິບັດກິດຈະກຳຕ່າງໆ ຕາມແຄມທາງ ຕ້ອງໃຫ້ຮັບປະກັນວ່າຈະບໍ່ກີດຂວາງການຈະລາຈອນ ຫລື ກໍ່ຄວາມອັນຕະລາຍໃຫ້ແກ່ຜູ້ສັນຈອນໄປມາ.
   - ຜູ້ໂດຍສານທີ່ນັ່ງກະບະຫລັງຂອງລົດກະບະຕ້ອງໃຫ້ມີບ່ອນນັ່ງ ທີ່ປອດໄພ ຫ້າມເດັດຂາດບໍ່ໃຫ້ນັ່ງຂອບກະບະ.
   - ຜູ້ຂັບຂີ່ ທີ່ຂັບລົດໃນຂະນະມຶນເມົາ, ຂັບຂີ່ໄວເກີນກຳນົດ, ຂັບຂີ່ດ້ວຍຄວາມປະໝາດ ຫລື ດ້ວຍຄວາມ ຄຶກຄະນອງ ຖ້າໃນສະຖານເບົາ ຕ້ອງໃຫ້ສຶກສາອົບຮົມ, ຕັກເຕືອນ ແຕ່ຖ້າເຫັນ ວ່າຍັງມີການດື້ດ້ານ, ຝ່າຝືນ ເປັນການລະເມີດຢ່າງຮ້າຍແຮງ ຫລື ມີພຶດຕິກຳທີ່ບໍ່ເໝາະສົມໃຫ້ປະຕິບັດມາດຕະການລົງໂທດຕາມ ລະບຽບກົດໝາຍ.

- ສຳລັບນະຄອນຫລວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ ໃຫ້ສົມທົບກັບເຈົ້າໜ້າທີ່ຕຳຫລວດຈະລາຈອນຈັດຕັ້ງການກວດກາທາດເຫລົ້າຂອງຜູ້ຂັບຂີ່ ແລະ ກວດກາ ຄວາມໄວລົດ ຕາມເສັ້ນທາງຫລວງແຫ່ງຊາດ. ໂດຍໃຫ້ເອົາໃຈໃສ່ເປັນພິເສດຕໍ່ລົດຂົນສົ່ງຜູ້ໂດຍສານ. ຖ້າພົບເຫັນຜູ້ລະເມີດ ເຊັ່ນ: ຂັບລົດໄວເກີນກຳນົດ ໃຫ້ປັບໃໝຕາມລະບຽບ, ຖ້າຜູ້ຂັບຂີ່ເມົາເຫລົ້າ ໃຫ້ກັກລົດໄວ້ຈົນຜູ້ຂັບສວ່າງເມົາຈຶ່ງໃຫ້ຂັບໄປຕໍ່ ຫລື ແຈ້ງໃຫ້ບໍລິສັດກ່ຽວຂ້ອງ ສົ່ງຜູ້ຂັບຄົນໃໝ່ມາປ່ຽນເພື່ອຂັບໄປຕໍ່.
- ໃຫ້ແຕ່ງຕັ້ງຄະນະວິຊາການກວດກາລົງສົມທົບກັບສະຖານີຂົນສົ່ງໂດຍສານກວດກາສະພາບເຕັກນິກລົດ, ຜູ້ຂັບຂີ່ ລວມທັງການບັນທຸກຄົນໂດຍສານ ແລະ ສິນຄ້າ ເມື່ອເຫັນວ່າຖືກຕ້ອງ ແລະ ຮຽບຮ້ອຍດີແລ້ວ ຈຶ່ງປ່ອຍລົດອອກຈາກສະຖານີ.
- ເອົາໃຈໃສ່ເຂັ້ມງວດຕໍ່ການກວດກາການໃສ່ໝວກກັນກະທົບ ຂອງຜູ້ຂັບຂີ່ລົດຈັກ, ຖ້າພົບເຫັນຜູ້ລະເມີດ (ບໍ່ໃສ່ໝວກ ຫລືໃສ່ໝວກແຕ່ບໍ່ໃສ່ສາຍຮັດຄາງໃຫ້ແໜ້ນ) ໃຫ້ປັບໃໝຕາມລະບຽບການ.
- ກວດກາຜູ້ຂັບ ແລະ ຜູ້ໂດຍສານ ລົດປະເພດສີ່ລໍ້ຂຶ້ນໄປ ທີ່ແລ່ນທາງໄກຕ້ອງໃສ່ສາຍຮັດນິລະໄພ ຖ້າພົບເຫັນຜູ້ບໍ່ໃສ່ ໃຫ້ແນະນຳ ແລະ ຕັກເຕືອນ.
- ໃຫ້ເລີ່ມຈັດຕັ້ງປະຕິບັດການຕິດຕາມ-ກວດກາ ແຕ່ວັນທີ 12 - 18 ເມສາ 2010.
- ໃຫ້ກົມຂົນສົ່ງແຕ່ງຕັ້ງວິຊາການລົງສົມທົບກັບເຈົ້າໜ້າທີ່ຕຳຫລວດຈະລາຈອນ ແລະ ຕຳຫລວດທາງຫລວງ ໃນການກວດກາຍານພາຫະນະ ແລະ ຜູ້ຂັບຂີ່ ໃຫ້ໄດ້ຮັບຜົນດີ.

2. ໃຫ້ສົມທົບກັບເຈົ້າໜ້າທີ່ຕຳຫລວດຈະລາຈອນ ເກັບກຳສະພາບການເກີດອຸປະຕິເຫດແຕ່ລະວັນ ໃນເຂດທ້ອງຖິ່ນທີ່ຕົນຮັບຜິດຊອບຕະຫລອດຊ່ວງບຸນປີໃໝ່ລາວ, ເລີ່ມແຕ່ວັນທີ 12-18 ເມສາ 2009, ໂດຍເຮັດເປັນບົດສະຫລຸບປະຈຳແຕ່ລະວັນແລ້ວສັງລວມ( ຕາມແບບຟອມທີ່ຕິດຄັດມາພ້ອມນີ້ ), ຖ້າຫາກມີອຸປະຕິເຫດໃດທີ່ຮ້າຍແຮງ ມີຜູ້ບາດເຈັບ ແລະ ເສັຍຊີວິດເປັນຈຳນວນຫລາຍ ໃຫ້ເຮັດບົດລາຍງານລະອຽດສະເພາະ ແລ້ວສົ່ງໃຫ້ກົມຂົນສົ່ງ ຢ່າງຊ້າບໍ່ໃຫ້ກາຍວັນທີ 25 ເມສາ 2010 ນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ